ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 5138 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 07 ຕຸລາ 2024

# ແຈ້ງການ

**ຮຽນ :** ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ

**ເລື່ອງ:** ນຳສົ່ງແຜນຄວາມຕ້ອງການຮ່າງປະກາສະນີຍະບັດຈົບຊັ້ນປະຖົມສຶກສາ(ປ.5), ຊັ້ນມັດທະຍົມສຶກສາຕອນຕົ້ນ(ມ.4) ແລະ ຊັ້ນມັດທະຍົມສຶກສາຕອນປາຍ(ມ.7) ສົກຮຽນ 2024-2025.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມສາມັນສຶກສາ ສະບັບເລກທີ 4866/ສສກ, ລົງວັນທີ 22 ກັນຍາ 2022.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອເຮັດໃຫ້ການຈັດພິມຮ່າງປະກາສະນີຍະບັດຈົບຊັ້ນປະຖົມສຶກສາ (ປ.5), ຊັ້ນມັດທະຍົມສຶກສາຕອນຕົ້ນ (ມ.4) ແລະ ຊັ້ນມັດທະຍົມສຶກສາຕອນປາຍ (ມ.7) ປະຈຳສົກຮຽນ 2024–2025 ໃຫ້ຖືກຕ້ອງຕາມສະຖິຕິຕົວຈິງ ແລະ ພຽງພໍ. ສະນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເກັບກຳ ແລະ ສັງລວມຈຳນວນນັກຮຽນແຕ່ລະຊັ້ນໃນແຂວງຂອງທ່ານໃຫ້ຊັດເຈນ, ສັງລວມເປັນແຜນຄວາມຕ້ອງການ ແລ້ວສົ່ງມາຍັງກົມສາມັນສຶກສາ ***ບໍ່ໃຫ້ກາຍວັນທີ 30 ພະຈິກ 2024*** ເພື່ອຈະໄດ້ສັງລວມ ແລະ ນຳສະເໜີຫາສຳນັກພິມສຶກສາ ແລະ ກິລາ ເພື່ອຂໍອະນຸມັດຈັດພິມສົ່ງໃຫ້ແຕ່ລະແຂວງ ແລະ ນະຄອນຫຼວງ ໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມຄວາມເໝາະສົມດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ນ. ດາລາວອນ ກິດຕິພັນ

ກະຊວງສຶກສາທິການ ແລະ ກິລາ, ກົມສາມັນສຶກສາ, ຖະໜົນລ້ານຊ້າງ ຕູ້ ປນ. 67 ນະຄອນຫຼວງວຽງຈັນ
ໂທ: 021-219215 ຕໍ່ 221; ແຟັກ: 021-219634; ອີເມວ: dge.edu2022@gmail.com